# ບົດລາຍງານ
# ຜົນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານຂອງ
# ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ
# ປະຈຳປີ 2024




ໂດຍ:
ຕະຫຼາດຫຼັກຊັບລາວ

# ສາລະບານ

ສາລະບານ ..... i

1. ຂໍ້ມູນກ່ຽວກັບ ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ..... 1

1.1. ຂໍ້ມູນທົ່ວໄປ ..... 1

1.2. ຂໍ້ມູນທາງການເງິນ ..... 1

1.3. ຂໍ້ມູນສະພາບໍລິຫານ ..... 1

1.4. ຂໍ້ມູນຄະນະອຳນວຍການ ..... 1

1.6. ຂໍ້ມູນຜູ້ຮັບຜິດຊອບວຽກງານ CG ..... 2

2. ພາບລວມຄະແນນຜົນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ ..... 2

2.1. ຜົນການປະເມີນຄະແນນຕົວຈິງ ..... 2

2.2. ຜົນການປະເມີນແຍກຕາມໝວດການໃຫ້ຄະແນນ ..... 2

3. ຂໍ້ປະຕິບັດສອດຄ່ອງ ແລະ ຂໍ້ຄົງຄ້າງ ..... 3

3.1. ພາກທີ 1 ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ ..... 3

3.2. ພາກທີ 2 ການຄຸ້ມຄອງສາຍພົວພັນກັບຜູ້ມີສ່ວນຮ່ວມໃນຕະຫຼາດ ..... 4

3.3. ພາກທີ 3 ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ ..... 5

3.4. ພາກທີ 4 ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ ..... 6

4. ສິ່ງທີ່ຕ້ອງໄດ້ປັບປຸງ ..... 8

4.1. ສິ່ງທີ່ຄວນກຳນົດໃນລະບຽບພາຍໃນ ຫຼື ລະບຽບການສະເພາະຂອງບໍລິສັດ ..... 8

4.2. ສິ່ງທີ່ຄວນນຳໄປເປີດເຜີຍຂໍ້ມູນ ແລະ ຈັດຕັ້ງປະຕິບັດ ..... 9

# 1. ຂໍ້ມູນກ່ຽວກັບ ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

## 1.1. ຂໍ້ມູນທົ່ວໄປ

| ຫົວຂໍ້ | ລາຍລະອຽດ |
|---|---|
| ຊື່ບໍລິສັດ: | ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (ປທລ) |
| ທີ່ຕັ້ງສຳນັກງານ: | ເລກທີ 246, ໜ່ວຍ 13 ຖະໜົນກຳແພງເມືອງ ບ້ານ ໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ |
| ເບີໂທລະສັບ: | 021-264834 |
| ປະເພດທຸລະກິດ: | ນຳເຂົ້າ ແລະ ຈຳໜ່າຍ ພະລັງງານນ້ຳມັນເຊື້ອໄຟ |
| ວັນ.ເດືອນ.ປີ ຈົດທະບຽນໃນ ຕລຊລ: | 09 ທັນວາ 2014 |
| ເວັບໄຊ້: | www.petrotradelaos.com |
| ຈຳນວນພະນັກງານ: | 156 ຄົນ |
| ຈຳນວນຮຸ້ນຈົດທະບຽນ: | 235,000,000 ຮຸ້ນ |
| ລາຄາຕະຫຼາດ (20/12/2023): | 790 ກີບ/ຮຸ້ນ |
| ມູນຄ່າຕະຫຼາດ (20/12/2023): | 185,650,000,000 ກີບ |

## 1.2. ຂໍ້ມູນທາງການເງິນ

| ຕົວເລກຂໍ້ມູນການເງິນ ( 31 ທັນວາ 2023) | |
|---|---|
| ຊັບສິນ: 2,242,512 ລ້ານກີບ | ລາຍຮັບ: 3,877,808 ລ້ານກີບ |
| ໜີ້ສິນ: 1,673,115 ລ້ານກີບ | ລາຍຈ່າຍ: 3,865,402 ລ້ານກີບ |
| ທຶນ: 569,396 ລ້ານກີບ | ກຳໄລສຸດທິ: 12,406 ລ້ານກີບ |

## 1.3. ຂໍ້ມູນສະພາບໍລິຫານ

ສະມາຊິກສະພາບໍລິຫານ ຂອງ ບໍລິສັດ ປທລ ປະກອບມີສະມາຊິກທັງໝົດ 7 ທ່ານ:

| ລ.ດ | ຊື່ ແລະ ນາມສະກຸນ | ຕຳແໜ່ງ |
|---|---|---|
| 1 | ທ່ານ ຫວ່າງ ຣັຕະນະວົງສ໌ | ປະທານສະພາບໍລິຫານ |
| 2 | ທ່ານ ຄຳສອນ ສິດທິໄຊ | ຮອງປະທານສະພາບໍລິຫານ |
| 3 | ທ່ານ ມາກ ລູວັນ | ສະມາຊິກ |
| 4 | ທ່ານ ນາງ ແສງເດືອນ ກ້ຽວສຸວັດ | ສະມາຊິກ |
| 5 | ທ່ານ ວຽງຄອນ ສິດທິໄຊ | ສະມາຊິກອິດສະຫຼະ |
| 6 | ທ່ານ ບຸນຖັນ ວົງສຸລີ | ສະມາຊິກອິດສະຫຼະ |
| 7 | ທ່ານ ສຈ ດາວອນ ຫວ່າງວິຈິດ | ສະມາຊິກອິດສະຫຼະ |

## 1.4. ຂໍ້ມູນຄະນະອຳນວຍການ

| ລ.ດ | ຊື່ ແລະ ນາມສະກຸນ | ຕຳແໜ່ງ |
|---|---|---|
| 1 | ທ່ານ ຈັນທອນ ສິດທິໄຊ | ຜູ້ອຳນວຍການໃຫຍ່ |

| | | |
|---|---|---|
| 2 | ທ່ານ ນາງ ສະຫວັນທອງ ພົງສະຫວັນ | ຮອງຜູ້ອຳນວຍການໃຫຍ່ |

### 1.6. ຂໍ້ມູນຜູ້ຮັບຜິດຊອບວຽກງານ CG

| ລ.ດ | ຊື່ ແລະ ນາມສະກຸນ | ເບີໂທ | ອີເມລ |
|---|---|---|---|
| 1 | ທ່ານ ນາງ ຈັນທະດອມ ເມກສະຫວັນ | 020 5555 9036 | Chanthadom.msv@petrotradelaos.com |
| 2 | ທ່ານ ຄຳພຸດ ສີມບຸນ | 020 5555 9043 | Khamphout.sb@petrotradelaos.com |
| 3 | ທ່ານ ນາງ ອຳໄພວັນ ລາຊະສີມາ | 020 2224 4723 | Amphaivanh.lssm@petrotradelaos.com |

## 2. ພາບລວມຄະແນນຜົນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ

### 2.1. ຜົນການປະເມີນຄະແນນຕົວຈິງ

ຜົນປະເມີນຄະແນນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານຕົວຈິງ ບໍລິສັດ ປທລ ປະຈຳປີ 2024 ແມ່ນເຫັນວ່າ: ບໍລິສັດ ປທລ ໄດ້ຄະແນນທັງໝົດ 41.44 ຄະແນນ ຈັດເປັນ 2 ດາວ ຊຶ່ງມີລາຍລະອຽດເພີ່ມເຕີມດັ່ງນີ້:

| ພາກ | ຄະແນນທັງໝົດ | ຄະແນນຕົວຈິງ |
|---|---|---|
| ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ | 10 | 5.00 |
| ການຄຸ້ມຄອງສາຍພົວພັນກັບຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ | 10 | 4.55 |
| ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ | 40 | 20.54 |
| ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ | 40 | 11.35 |
| **ລວມ** | **100** | **41.44** |

1. ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ ປະຕິບັດໄດ້ 5.00 ຄະແນນ;
2. ການຄຸ້ມຄອງສາຍພົວພັນກັບຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ ປະຕິບັດໄດ້ 4.55 ຄະແນນ;
3. ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ ປະຕິບັດໄດ້ 20.54 ຄະແນນ;
4. ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ ປະຕິບັດໄດ້ 11.35 ຄະແນນ.


### 2.2. ຜົນການປະເມີນແຍກຕາມໝວດການໃຫ້ຄະແນນ

ການໃຫ້ຄະແນນປະກອບມີ 3 ປະເພດຄື: FA (Fully Applied) - ປະຕິບັດໄດ້ທັງໝົດ = 1 ຄະແນນ, PA (Partial Applied) - ປະຕິບັດໄດ້ບາງສ່ວນ = 0.5 ຄະແນນ ແລະ NA (Not Applied) - ບໍ່ສາມາດປະຕິບັດໄດ້ = 0 ຄະແນນ, ບໍລິສັດ ປທລ ສາມາດປະຕິບັດໄດ້ດັ່ງນີ້:

| ปทล | ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ | | ການຄຸ້ມຄອງສາຍພົວພັນກັບຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ | | ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ | | ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ | | ລວມ | |
|---|---|---|---|---|---|---|---|---|---|---|
| | ຄຳຖາມ | % | ຄຳຖາມ | % | ຄຳຖາມ | % | ຄຳຖາມ | % | ຄຳຖາມ | % |
| ປະຕິບັດໄດ້ທັງໝົດ | 7.0 | 47% | 3.0 | 27% | 15.0 | 41% | 6.0 | 16% | 31.0 | 31% |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| ປະຕິບັດໄດ້ບາງສ່ວນ | 1.0 | 7% | 4.0 | 36% | 8.0 | 22% | 9.0 | 24% | 22.0 | 22% |
| ບໍ່ສາມາດປະຕິບັດໄດ້ | 7.0 | 47% | 4.0 | 36% | 14.0 | 38% | 22.0 | 59% | 47.0 | 47% |
| ລວມ | **15.0** | **100%** | **11.0** | **100%** | **37.0** | **100%** | **37.0** | **100%** | **100.0** | **100%** |

ຈາກຂໍ້ມູນຂ້າງເທິງນີ້ ແມ່ນເຫັນໄດ້ວ່າ ບໍລິສັດ ປທລ ສາມາດຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານໄດ້ທັງໝົດ 31%, ຮອງລົງມາແມ່ນສາມາດປະຕິບັດໄດ້ບາງສ່ວນ 22% ແລະ ບໍ່ສາມາດປະຕິບັດໄດ້ 47% ຂອງ ຄຳຖາມທັງໝົດ. ຜົນການປະເມີນຂ້າງເທິງ ສາມາດສະທ້ອນຜ່ານເສັ້ນສະແດງ ດັ່ງນີ້:




## 3. ຂໍ້ປະຕິບັດສອດຄ່ອງ ແລະ ຂໍ້ຄົງຄ້າງ

### 3.1. ພາກທີ 1 ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ

ບໍລິສັດ ປທລ ສາມາດປະຕິບັດໄດ້ທັງໝົດ (FA) 47%, ຮອງລົງມາແມ່ນປະຕິບັດໄດ້ບາງສ່ວນ (PA) 7% ແລະ ບໍ່ສາມາດປະຕິບັດໄດ້ແມ່ນ (NA) 47% ຂອງຄຳຖາມທັງໝົດໃນພາກນີ້ ຊຶ່ງມີລາຍລະອຽດ ດັ່ງນີ້:

| ຂໍ້ປະຕິບັດສອດຄ່ອງ | ຂໍ້ຄົງຄ້າງ |
|---|---|
| - ບໍລິສັດ ປທລ ໄດ້ນຳສົ່ງໜັງສືເຊີນໃຫ້ແກ່ຜູ້ຖືຮຸ້ນ ຢ່າງໜ້ອຍ 21 ວັນ ພ້ອມທັງໄດ້ແຈ້ງຂັ້ນຕອນ ແລະ ວິທີການລົງຄະແນນສຽງ ລວມເຖິງໃຫ້ສິດແກ່ຜູ້ຖືຮຸ້ນໃນການລົງຄະແນນສຽງ 1 ຮຸ້ນຕໍ່ 1 ສຽງໃນກອງປະຊຸມຜູ້ຖືຮຸ້ນ.<br>- ບໍລິສັດ ປທລ ໄດ້ມີການແຕ່ງຕັ້ງ ຫຼື ຍົກເລີກສັນຍາບໍລິສັດກວດສອບ ແລະ ຄ່າບໍລິການກວດສອບໄດ້ຮັບອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນ.<br>- ຜູ້ຖືຮຸ້ນໄດ້ຮັບຂໍ້ມູນກ່ຽວກັບປະສົບການ ແລະ ປະຫວັດຫຍໍ້ຂອງເປົ້າໝາຍຜູ້ສະໝັກທີ່ຖືກສະເໜີລາຍຊື່ ເພື່ອປະກອບເປັນສະມາຊິກສະພາບໍລິຫານ ລວມທັງຂໍ້ມູນກ່ຽວ | - ບໍລິສັດ ປທລ ຍັງບໍ່ກຳນົດນະໂຍບາຍສິດຂອງຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນ 5% ຂຶ້ນໄປຂອງຈຳນວນທັງໝົດຂອງບໍລິສັດ ມີສິດໃນການເພີ່ມວາລະກອງປະຊຸມຜູ້ຖືຮຸ້ນ ແລະ ສິດໃນການສະເໜີລາຍຊື່ຜູ້ສະໝັກເປັນສະມາຊິກສະພາບໍລິຫານຂອງບໍລິສັດ ພ້ອມທັງໃຫ້ສິດແກ່ ຜູ້ຖືຮຸ້ນທີ່ຖືຮຸ້ນ ຫຼື ຖືລວມກັນໜ້ອຍກວ່າ 5% ຂອງຈຳນວນທັງໝົດຂອງບໍລິສັດ ມີສິດໃນການສະເໜີເພີ່ມວາລະກອງປະຊຸມຜູ້ຖືຮຸ້ນຕໍ່ບໍລິສັດ ເພື່ອພິຈາລະນາ ໄວ້ໃນກົດລະບຽບພາຍໃນຂອງບໍລິສັດ. |

| | |
|---|---|
| ກັບອາຍຸ, ວຸດທິການສຶກສາ, ປະສົບການ ແລະ ການດຳລົງຕຳແໜ່ງຂອງພວກເຂົາໃນບໍລິສັດຈົດທະບຽນ ກ່ອນກອງປະຊຸມຜູ້ຖືຮຸ້ນ.<br>- ຜູ້ອຳນວຍການໃຫຍ່ ແລະ ຜູ້ກວດສອບພາຍນອກ ໄດ້ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ເປັນປະຈຳເພື່ອຕອບຄຳຖາມ ແລະ ຊີ້ແຈງປະເດັນທີ່ກ່ຽວຂ້ອງ. | - ບໍລິສັດ ປທລ ຍັງບໍ່ກຳນົດນະໂຍບາຍສິດຂອງຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນ 10% ຂຶ້ນໄປຂອງຈຳນວນທັງໝົດ ຂອງບໍລິສັດ ມີສິດສະເໜີສະພາບໍລິຫານ ຫຼື ຜູ້ອຳນວຍການບໍລິສັດ ເພື່ອຂໍເປີດກອງປະຊຸມຜູ້ຖືຮຸ້ນ ໄວ້ໃນກົດລະບຽບພາຍໃນຂອງບໍລິສັດ.<br>- ບໍລິສັດ ປທລ ຍັງບໍ່ໄດ້ກຳນົດກ່ຽວກັບນະໂຍບາຍປັນຜົນ ໂດຍສະເພາະຕິດພັນກັບວິທີການຈ່າຍເງິນປັນຜົນ ພາຍໃນ 30 ວັນ ພາຍຫຼັງມີມະຕິກອງປະຊຸມຜູ້ຖືຮຸ້ນ.<br>- ບໍລິສັດ ປທລ ຍັງບໍ່ກຳນົດເຫດການກ່ຽວກັບການອອກຈຳໜ່າຍຮຸ້ນໃໝ່, ທຸລະກຳ ຊື້ ຂາຍ ຫຼື ໂອນ ຊັບສິນ ທີ່ມີມູນຄ່າ 50% ຂອງຊັບສິນທັງໝົດ ຫຼື ເຫດການອື່ນໆ ທີ່ສຳຄັນ ຊຶ່ງຕ້ອງຜ່ານການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ ໄວ້ໃນກົດລະບຽບພາຍໃນ ຫຼື ລະບຽບການສະເພາະຂອງບໍລິສັດ. |

**3.2. ພາກທີ 2 ການຄຸ້ມຄອງສາຍພົວພັນກັບຜູ້ມີສ່ວນຮ່ວມໃນຕະຫຼາດ**

ບໍລິສັດ ປທລ ສາມາດປະຕິບັດໄດ້ທັງໝົດ (FA) 27%, ຮອງລົງມາແມ່ນປະຕິບັດໄດ້ບາງສ່ວນ (PA) 36% ແລະ ບໍ່ສາມາດປະຕິບັດໄດ້ແມ່ນ (NA) 36% ຂອງຄຳຖາມທັງໝົດໃນພາກນີ້ ຊຶ່ງມີລາຍລະອຽດ ດັ່ງນີ້:

| ຂໍ້ປະຕິບັດສອດຄ່ອງ | ຂໍ້ຄົງຄ້າງ |
|---|---|
| - ບໍລິສັດ ປທລ ໄດ້ລະບຸຊ່ອງທາງການຕິດຕໍ່ພົວພັນ ເພື່ອຮັບຄຳເຫັນ ຫຼື ຄຳຮ້ອງຮຽນ ຂອງຜູ້ມີສ່ວນຮ່ວມໃນຕະຫຼາດຂອງຕົນ ກ່ຽວກັບບັນຫາ, ຂໍ້ສົງໄສ ຫຼື ການລະເມີດສິດ/ສັນຍາຂອງພວກເຂົາ ໄວ້ໃນເວັບໄຊ ຫຼື ບົດສະຫຼຸບການເຄື່ອນໄຫວທຸລະກິດປະຈຳປີຂອງ ບໍລິສັດ.<br>- ສະພາບໍລິຫານ ໄດ້ກຳນົດນະໂຍບາຍສິ່ງແວດລ້ອມ ແລະ ການສົ່ງເສີມການພັດທະນາແບບຍືນຍົງ ຂອງບໍລິສັດ.<br>- ສະພາບໍລິຫານ ໄດ້ກຳນົດນະໂຍບາຍກ່ຽວກັບການຄັດເລືອກຄູ່ຄ້າ, ຜູ້ສະໜອງ ແລະ ຜູ້ຮັບເໝົາ. | - ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ມີສ່ວນຮ່ວມໃນຕະຫຼາດຂອງຕົນ.<br>- ບໍລິສັດ ປທລ ບໍ່ໄດ້ກຳນົດນະໂຍບາຍດ້ານຄວາມປອດໄພ, ສະຫວັດດີການສັງຄົມ ໃຫ້ແກ່ພະນັກງານ.<br>- ສະພາບໍລິຫານ ບໍ່ ໄດ້ສ້າງ ແລະ ກຳນົດນະໂຍບາຍໃນການຝຶກອົບຮົມ ແລະ ພັດທະນາບຸກຄະລາກອນ.<br>- ບໍລິສັດ ປທລ ຍັງບໍ່ໄດ້ສ້າງກົນໄກ ສຳລັບການສະໜອງຂໍ້ມູນ, ຄຳເຫັນ ຫຼື ຄຳຮ້ອງຮຽນ ຂອງພະນັກງານ ຕໍ່ກັບພຶດຕິກຳທີ່ບໍ່ສອດຄ່ອງກັບຫຼັກຈັນຍາບັນ, ລະບຽບການ ຫຼື ກົດໝາຍ ຂອງສະມາຊິກສະພາບໍລິຫານ ຫຼື ຜູ້ບໍລິຫານລະດັບສູງຂອງບໍລິສັດ.<br>- ສະພາບໍລິຫານ ຍັງບໍ່ ໄດ້ສ້າງ ແລະ ກຳນົດນະໂຍບາຍເພື່ອປົກປ້ອງພະນັກງານ ຫຼື ຜູ້ມີສ່ວນຮ່ວມໃນຕະຫຼາດຂອງຕົນ ທີ່ສະໜອງຂໍ້ມູນ, ຄຳເຫັນ ຫຼື ຄຳຮ້ອງຮຽນ ກ່ຽວກັບພຶດຕິກຳທີ່ບໍ່ສອດຄ່ອງກັບຫຼັກຈັນຍາບັນຂອງ ບໍລິສັດ. |

| | |
|---|---|
| | - ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍການຕ້ານການສໍ້ໂກງ ແລະ ການຮັບ ຫຼື ໃຫ້ສິນບົນ ຢ່າງເຂັ້ມງວດ ໄວ້ໃນກົດລະບຽບກ່ຽວກັບຈັນຍາບັນຂອງບໍລິສັດ.<br>- ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍພົວພັນກັບຊຸມຊົນທ້ອງຖິ່ນທີ່ບໍລິສັດດຳເນີນງານຢູ່.<br>- ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເຈົ້າໜີ້ ເປັນຕົ້ນແມ່ນ ການກຳນົດເງື່ອນໄຂການຄ้ำປะกัน ແລະ ການຜິດນັດຊຳລะໜີ້ ໃນນິຕິກຳຂອງບໍລິສັດ. |

### 3.3. ພາກທີ 3 ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ

ບໍລິສັດ ປທລ ສາມາດປະຕິບັດໄດ້ທັງໝົດ (FA) 41%, ຮອງລົງມາແມ່ນປະຕິບັດໄດ້ບາງສ່ວນ (PA) 22% ແລະ ບໍ່ສາມາດປະຕິບັດໄດ້ແມ່ນ (NA) 38% ຂອງຄຳຖາມທັງໝົດໃນພາກນີ້ ຊຶ່ງມີລາຍລະອຽດ ດັ່ງນີ້:

| ຂໍ້ປະຕິບັດສອດຄ່ອງ | ຂໍ້ຄົງຄ้າง |
|---|---|
| - ບໍລິສັດ ປທລ ໄດ້ເປີດເຜີຍກ່ຽວກັບ ວິໄສທັດ, ຈຸດປะสົງ, ເป้ าหมาย ຫຼື ແຜນຍຸດທะสาดใน ການເຄື່ອນໄຫວວຽກງານຂອງບໍລິສັດ.<br>- ບໍລິສັດ ປທລ ໄດ້ເປີດເຜີຍຂໍ້ມູນກ່ຽວກັບປັດໄຈຄວາມສ່ຽງຂອງບໍລິສັດ, ຂໍ້ມູນທາງການເງິນ ແລະ ບໍ່ແມ່ນທາງການເງິນ, ຂໍ້ມູນກ່ຽວກັບປะຫวัดการสึกสา ແລະ ການຝຶກອົບຮົມ ຂອງສະມາຊິກສະພາບໍລິຫານ ໃນບົດລາຍງານການເຄື່ອນໄຫວທຸລะกิดปะจำปีຂອງບໍລິສັດ.<br>- ບໍລິສັດ ປທລ ໄດ້ເປີດເຜີຍເອກะสานลายงานการเงินไตมาด 3 ภายใน 45 ວັນ ນັບແຕ່ວັນສິ້ນສຸດไตมาด 3 ເປັນຕົ້ນໄປ.<br>- ບໍລິສັດ ປທລ ໄດ້ເປີດເຜີຍເອກะสานลายงานการเงินปะจำ 6 ເດືອນຕົ້ນປີ ທີ່ຜ่านการทบทวนจากผู้กวดสอบภายนอก ภายใน 60 ວັນ ນັບແຕ່ວັນສິ້ນสุดไตมาด 2 ເປັນຕົ້ນໄປ.<br>- ບໍລິສັດ ປທລ ໄດ้เปิดเผยเอกะสานลายงานการเงินที่ผ่านการกวดสอบจากผู้กวดสอบภายนอก ภายใน 120 ວັນ ນັບแต่วันสิ้นสุดปีการบัญชี.<br>- ບໍລິສັດ ປທລ ໄດ้เปิดเผยมะติกองปะชุมผู้ถือหุ้น ภายในกำหนดเวลา 24 ชั่วโมง นับแต่วันสำเร็จกองปะชุมผู้ถือหุ้นเป็นต้นไป.<br>- ບໍລິສັດ ປທລ ໄດ้เปิดเผยค่าบริการของบริษัทกวดสอบที่ได้รับจากการกวดสอบเอกะสานลายงานการเงินในแต่ละปี. | - ບໍລິສັດ ປທລ ບໍ່ໄດ้เปิดเผยนะโยบายกรุ่วกับลายการที่กรุ่วพันเป็นต้นขั้นตอนการพิจาละนา ແລະ ການอะนุมัดขั้นตอนกรุ่วกับลายการ RPT, กุ่มบริษัทหรือ บริษัทในกุ่มของตน, นะโยบายเงินปันผล, จำนวนครั้งในการจัดกองปะชุมสะพาบริหาร ແລະ กองปะชุมคะนะกำมะการของสะพาบริหาร, เหตุการสำคัญที่เกิดพายในปี ແລะ นะโยบายค่าตอบแทน ແລะ มูลค่ารวมทั้งหมดของสะมาชิกสะพาบริหาร, คะนะกำมะการสะพาบริหาร ແລะ คะนะอำนวยการ ในแต่ละปี ในบิดลายงานการเคลื่อนไหวทุละกิดปะจำปี.<br>- ບໍລິສັດ ປທລ ໄດ้เปิดเผยข้อมูลกรุ่วกับ ลักสะนะ มูลค่า ແລะ ลายชื่ บุกคล ແລะ นิติบุกคล ที่กรุ่วพันพ้อมทั้ง สายพัวพันของผู้กรุ่วต่อลายการที่กรุ่วพันในเอกะสานลายงานการเงินของบริษัท.<br>- ບໍລິສັດ ປທລ ບໍ່ໄດ้เปิดเผยข้อมูลกรุ่วกับ ลายชื่ผู้ถือหุ้น ทางกง ແລะ ทางอ้อม ที่ถือหุ้นแต่ 5% ขึ้นไป.<br>- ບໍລິສັດ ປທລ ບໍ່ໄດ้เปิดเผยข้อมูลกรุ่วกับการถือหุ้น ทางกง ແລะ ทางอ้อมของสะมาชิกสะพาบริหาร ແລะ คะนะอำนวยการ.<br>- ບໍລິສັດ ປທລ ບໍ່ໄດ้เปิดเผยข้อมูลกรุ่วกับเอกะสานลายงานการเงินปะจำไตมาด/ปะจำปี, บิดลายงานการเคลื่อนไหวทุละกิดปะจำ 6 เดือนต้นปี/ปะจำปี, มะติกองปะชุมผู้ถือหุ้น ແລะ บิดบันทึกกองปะชุมผู้ถือหุ้น ในเว็บไซ้ของบริษัท อย่างปกะติ. |

| | |
|---|---|
| - ບໍລິສັດ ປທລ ໄດ້ເປີດເຜີຍຂໍ້ມູນກ່ຽວກັບພະນັກງານຮັບຜິດຊອບຕິດຕໍ່ພົວພັນກັບນັກລົງທຶນ (ນັກລົງທຶນສຳພັນ) ໃນເວັບໄຊຂອງບໍລິສັດ.<br>- ບໍລິສັດ ປທລ ໄດ້ມີການແຕ່ງຕັ້ງຜູ້ຮັບຜິດຊອບໃນການລາຍງານ ແລະ ຜູ້ຮັບຜິດຊອບວຽກງານເປີດເຜີຍຂໍ້ມູນ ແລະ ໄດ້ຜ່ານການຝຶກອົບຮົມວຽກງານດັ່ງກ່າວ. | - ບໍລິສັດ ປທລ ບໍ່ສາມາດໄດ້ເປີດເຜີຍເອກະສານລາຍງານການເງິນ ໄຕມາດ 1 ໄດ້ພາຍໃນ 45 ວັນ ນັບແຕ່ວັນສິ້ນສຸດໄຕມາດ 1.<br>- ບໍລິສັດ ປທລ ບໍ່ໄດ້ມີການສັບປ່ຽນ ບໍລິສັດກວດສອບທຸກໆ 5 ປີ.<br>- ບໍລິສັດ ປທລ ບໍ່ໄດ້ເປີດເຜີຍຄ່າບໍລິການອື່ນຂອງບໍລິສັດກວດສອບພາຍນອກ ທີ່ບໍ່ ແມ່ນການກວດສອບເອກະສານລາຍງານການເງິນ.<br>- ບໍລິສັດ ປທລ ບໍ່ໄດ້ລາຍງານ ຫຼື ເປີດເຜີຍຂໍ້ມູນການຊື້ຂາຍຮຸ້ນບໍລິສັດຂອງສະມາຊິກສະພາບໍລິຫານ ຫຼື ຄະນະອຳນວຍການ, ຫົວໜ້າກວດກາພາຍໃນ, ຫົວໜ້າບັນຊີ ແລະ ຫົວໜ້າການເງິນ ພາຍໃນ 72 ຊົ່ວໂມງ.<br>- ສະພາບໍລິຫານ ບໍ່ໄດ້ສ້າງ ແລະ ເປີດເຜີຍລະບຽບກ່ຽວກັບມາດຖານທີ່ນຳໃຊ້ໃນການຄັດເລືອກ, ຂັ້ນຕອນການຄັດເລືອກ ແລະ ແຕ່ງຕັ້ງສະພາບໍລິຫານຊຸດໃໝ່.<br>- ບໍລິສັດ ປທລ ບໍ່ໄດ້ສ້າງ ແລະ ເປີດເຜີຍລະບຽບພາຍໃນກ່ຽວກັບການກຳນົດຄ່າຕອບແທນຂອງສະພາບໍລິຫານ ຄະນະອຳນວຍການ ແລະ ພະນັກງານໃຫ້ມວນຊົນຊາບຜ່ານທາງເວັບໄຊຂອງບໍລິສັດ. |

### 3.4. ພາກທີ 4 ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ

ບໍລິສັດ ປທລ ສາມາດປະຕິບັດໄດ້ທັງໝົດ (FA) 16%, ປະຕິບັດໄດ້ບາງສ່ວນ (PA) 24% ແລະ ບໍ່ສາມາດປະຕິບັດໄດ້ (NA) 59% ຂອງຄຳຖາມໃນພາກນີ້ ຊຶ່ງມີລາຍລະອຽດ ດັ່ງນີ້:

| ຂໍ້ປະຕິບັດສອດຄ່ອງ | ຂໍ້ຄົງຄ້າງ |
|---|---|
| - ບໍລິສັດ ປທລ ມີສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ຢ່າງໜ້ອຍ 1 ທ່ານ ມີປະສົບການເຮັດວຽກໃນຂະແໜງການທີ່ກ່ຽວຂ້ອງກັບການດຳເນີນທຸລະກິດ ໃນນັ້ນ, ປະກອບດ້ວຍສະມາຊິກສະພາບໍລິຫານເພດຍິງ 1 ທ່ານ.<br>- ສະພາບໍລິຫານປະກອບມີສະມາຊິກ 7 ທ່ານ. ໃນນັ້ນ ມີສະມາຊິກອິດສະຫຼະ 3 ທ່ານ.<br>- ການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ສະມາຊິກສະພາບໍລິຫານໄດ້ຮັບການຕົກລົງເຫັນດີຈາກກອງປະຊຸມຜູ້ຖືຮຸ້ນ.<br>- ສະພາບໍລິຫານໄດ້ຈັດຕັ້ງກອງປະຊຸມຢ່າງໜ້ອຍ 4 ຄັ້ງຕໍ່ປີ.<br>- ປະທານສະພາບໍລິຫານແມ່ນສະມາຊິກອິດສະຫຼະ. | - ບໍລິສັດ ປທລ ຍັງບໍ່ໄດ້ກຳນົດໂຄງປະກອບຂອງສະພາບໍລິຫານ ຕ້ອງປະກອບມີສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ແລະ ສະມາຊິກເພດຍິງ ຢ່າງໜ້ອຍ 1 ທ່ານ, ເງື່ອນໄຂ ແລະ ມາດຕະຖານການເປັນສະມາຊິກສະພາບໍລິຫານ ແລະ ສະມາຊິກອິດສະຫຼະ, ອາຍຸການດຳລົງຕຳແໜ່ງ ຫຼື ພົ້ນຕຳແໜ່ງການເປັນສະມາຊິກສະພາບໍລິຫານ ລວມທັງສະມາຊິກອິດສະຫຼະ, ຂັ້ນຕອນ ແລະ ວິທີການເຮັດວຽກ ລວມໄປເຖິງນະໂຍບາຍກຳນົດຄ່າແທນຕ່າງໆຂອງສະມາຊິກສະພາບໍລິຫານ ແລະ ອື່ນໆ ໄວ້ໃນລະບຽບພາຍໃນຂອງບໍລິສັດ.<br>- ສະມາຊິກສະພາບໍລິຫານແຕ່ລະຄົນ ບໍ່ໄດ້ຮັບເອກະສານທີ່ຕິດພັນກັບກອງປະຊຸມສະພາບໍລິຫານ ຫຼື ຄະນະກຳມະການຂອງສະພາບໍລິຫານ ຢ່າງໜ້ອຍ 7 ວັນລັດຖະການ. |

| | |
|---|---|
| | - ກົດລະບຽບກ່ຽວກັບສະພາບໍລິຫານ ບໍ່ໄດ້ກຳນົດຈະແຈ້ງກ່ຽວກັບເງື່ອນໄຂ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ. ພ້ອມນັ້ນ, ກົດລະບຽບດັ່ງກ່າວ ບໍ່ໄດ້ເປີດເຜີຍໃນເວັບໄຊຂອງບໍລິສັດ.<br>- ສະພາບໍລິຫານ ບໍ່ແຕ່ງຕັ້ງ ຫຼື ສະໜອງເອກະສານກ່ຽວກັບການແຕ່ງຕັ້ງຄະນະກຳມະການກວດສອບ, ຄະນະກຳມະການຄຸ້ມຄອງຄວາມສ່ຽງ, ຄະນະກຳມະການຄັດເລືອກ ແລະ ຄະນະກຳມະການກຳນົດຄ່າຕອບ.<br>- ສະພາບໍລິຫານ ບໍ່ໄດ້ກຳນົດ ຈຸດປະສົງ, ວິໄສທັດ ແລະ ສື່ສານວັດທະນາທຳຂອງອົງກອນເພື່ອເຮັດໃຫ້ພະນັກງານທັງໝົດພາຍໃນບໍລິສັດເຂົ້າໃຈກ່ຽວກັບທິດທາງແຜນຍຸດທະສາດຂອງບໍລິສັດ.<br>- ບໍລິສັດ ປທລ ຍັງບໍ່ໄດ້ສ້າງ ແລະ ຮັບຮອງລະບຽບພາຍໃນກ່ຽວກັບຄະນະກຳມະການສະພາບໍລິຫານຕ່າງໆ ພ້ອມທັງເຜີຍແຜ່ລະບຽບການດັ່ງກ່າວໃຫ້ມວນຊົນຮັບຊາບຜ່ານເວັບໄຊຂອງບໍລິສັດ.<br>- ຄະນະກຳມະການຕ່າງໆຂອງສະພາບໍລິຫານ ບໍ່ໄດ້ມີການຈັດກອງປະຊຸມຂອງຕົນ ສອດຄ່ອງຕາມລະບຽບການທີ່ກ່ຽວຂ້ອງ.<br>- ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ເປີດເຜີຍແຜນສືບທອດພະນັກງານ ສຳລັບຕຳແໜ່ງສະມາຊິກສະພາບໍລິ ຫານ, ຄະນະອຳນວຍການ ແລະ ພະນັກງານທີ່ສຳຄັນຂອງບໍລິສັດ.<br>- ສະພາບໍລິຫານ ຍັງບໍ່ໄດ້ຮັບຮອງແຜນການຈັດກອງປະຊຸມສະພາບໍລິຫານທີ່ກວມເອົາວັນເວລາຈັດຕັ້ງກອງປະຊຸມສະພາບໍລິຫານ ແລະ ວາລະ ຈະປຶກສາຫາລື.<br>- ຄະນະກຳມະການຄຸ້ມຄອງຄວາມສ່ຽງ ຍັງບໍ່ໄດ້ສ້າງ ແລະ ຄຸ້ມຄອງຂັ້ນຕອນ ແລະ ນະໂຍບາຍໃນການກຳນົດ ແລະ ບໍລິຫານຄວາມສ່ຽງ.<br>- ສະພາບໍລິຫານ ຍັງບໍ່ໄດ້ກຳນົດອົງປະຊຸມຂອງກອງປະຊຸມສະພາບໍລິຫານຢ່າງໜ້ອຍ 2/3 ຂອງຈຳນວນສະມາຊິກທັງໝົດ ໄວ້ໃນກົດລະບຽບພາຍໃນຂອງບໍລິສັດ.<br>- ສະພາບໍລິຫານ ບໍ່ໄດ້ປະເມີນຜົນການເຄື່ອນໄຫວວຽກງານຂອງສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານປະຈຳປີ.<br>- ບໍລິສັດ ຍັງບໍ່ໄດ້ສ້າງ ແລະ ເປີດເຜີຍມາດຖານ, ເງື່ອນໄຂ ແລະ ຂັ້ນຕອນກ່ຽວກັບການປະເມີນຜົນການເຄື່ອນໄຫວວຽກງານຂອງປະທານສະພາບໍລິຫານ, ສະມາຊິກສະພາ |

| | |
|---|---|
| | ບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ ໃນ ບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ. |

## 4. ສິ່ງທີ່ຕ້ອງໄດ້ປັບປຸງ

### 4.1. ສິ່ງທີ່ຄວນກຳນົດໃນລະບຽບພາຍໃນ ຫຼື ລະບຽບການສະເພາະຂອງບໍລິສັດ

ເພື່ອປັບປຸງວຽກງານການຄຸ້ມຄອງບໍລິຫານໃຫ້ດີຂຶ້ນ, ບໍລິສັດ ປທລ ຄວນແກ້ໄຂບັນຫາທີ່ຍັງຄົງຄ້າງ ດັ່ງນີ້:

- ຄວນກຳນົດນະໂຍບາຍສິດຂອງຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນ 5% ຂຶ້ນໄປຂອງຈຳນວນທັງໝົດຂອງບໍລິສັດ ມີສິດໃນການເພີ່ມວາລະກອງປະຊຸມຜູ້ຖືຮຸ້ນ ແລະ ສິດໃນການສະເໜີລາຍຊື່ຜູ້ສະໝັກເປັນສະມາຊິກສະພາບໍລິຫານ ຂອງບໍລິສັດ ພ້ອມທັງໃຫ້ສິດແກ່ ຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນໜ້ອຍກວ່າ 5% ຂອງຈຳນວນທັງໝົດຂອງ ບໍລິສັດ ຄວນໄດ້ຮັບສິດໃນການສະເໜີເພີ່ມວາລະກອງປະຊຸມຜູ້ຖືຮຸ້ນຕໍ່ບໍລິສັດ ເພື່ອພິຈາລະນາ ໄວ້ໃນກົດ ລະບຽບພາຍໃນຂອງບໍລິສັດ;
- ຄວນກຳນົດນະໂຍບາຍສິດຂອງຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນ 10% ຂຶ້ນໄປຂອງຈຳນວນທັງໝົດຂອງບໍລິສັດ ມີສິດສະເໜີສະພາບໍລິຫານ ຫຼື ຜູ້ອຳນວຍການບໍລິສັດ ເພື່ອຂໍເປີດກອງປະຊຸມຜູ້ຖືຮຸ້ນ ໄວ້ໃນກົດລະບຽບພາຍໃນ ຂອງບໍລິສັດ;
- ຄວນກຳນົດເຫດການຕ່າງໆ ທີ່ຕ້ອງຜ່ານການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ ເປັນຕົ້ນ ການອອກຈຳໜ່າຍຮຸ້ນໃ ໝ່, ການລົງທຶນ ຊື້ ຂາຍ, ໂອນ ຊັບສິນທີ່ມູນຄ່າກວມເອົາ 50% ຂຶ້ນໄປ ຂອງຊັບສິນທັງໝົດຂອງບໍລິສັດ ແລະ ລາຍການທີ່ກ່ຽວພັນອື່ນໆ ໄວ້ໃນລະບຽບພາຍໃນຂອງບໍລິສັດ;
- ຄວນກຳນົດກ່ຽວກັບນະໂຍບາຍປັນຜົນ ໂດຍສະເພາະຕິດພັນກັບວິທີການຈ່າຍເງິນປັນຜົນ ພາຍໃນ 30 ວັນ ພາຍຫຼັງມີມະຕິກອງປະຊຸມຜູ້ຖືຮຸ້ນໄວ້ໃນກົດລະບຽບພາຍໃນຂອງບໍລິສັດ.
- ສະພາບໍລິຫານຄວນສ້າງ ແລະ ຮັບຮອງນະໂຍບາຍເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ມີສ່ວນຮ່ວມໃນ ຕະຫຼາດ, ນະໂຍບາຍກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເຈົ້າໜີ້ ເປັນຕົ້ນແມ່ນ ການກຳນົດ ເງື່ອນໄຂການຄ້ຳປະກັນ ແລະ ການຜິດນັດຊຳລະໜີ້;
- ສະພາບໍລິຫານ ຄວນສ້າງ ແລະ ຮັບຮອງ ນະໂຍບາຍການຝຶກອົບຮົມ ແລະ ພັດທະນາບຸກຄະລາກອນ, ນະໂຍບາຍ ການຕ້ານການສໍ້ໂກງ ແລະ ການຮັບ ຫຼື ໃຫ້ສິນບົນ ຢ່າງເຂັ້ມງວດ;
- ສະພາບໍລິຫານຄວນສ້າງ ແລະ ຮັບຮອງນະໂຍບາຍກ່ຽວກັບການພົວພັນຊຸມຊົນທ້ອງຖິ່ນທີ່ບໍລິສັດດຳເນີນການຢູ່;
- ສະພາບໍລິຫານ ຄວນກຳນົດໂຄງປະກອບບຸກຄະກອນສະພາບໍລິຫານຕ້ອງປະກອບສະມາຊິກອິດສະຫຼະ, ແລະ ສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ແລະ ສະມາຊິກສະພາບໍລິຫານເພດຍິງ, ອາຍຸການ ດຳລົງຕຳແໜ່ງ ຫຼື ພົ້ນຕຳແໜ່ງການເປັນສະມາຊິກສະພາບໍລິຫານ, ຂັ້ນຕອນ ແລະ ແຜນວິທີການເຮັດວຽກ, ນະໂຍບາຍກຳນົດຄ່າຕອບແທນຂອງສະມາຊິກສະພາບໍລິຫານ ແລະ ອື່ນໆໄວ້ໃນກົດລະບຽບພາຍໃນຂອງບໍລິສັດ;
- ຄວນສ້າງລະບຽບສະເພາະຂອງຄະນະກຳມະການຕ່າງໆຂອງສະພາບໍລິຫານ ເປັນຕົ້ນສິດ, ໜ້າທີ່, ຄວາມ ຮັບຜິດຊອບ, ໂຄງປະກອບບຸກຄະລາກອນ, ມາດຕະຖານ ແລະ ເງື່ອນໄຂການເປັນສະມາຊິກຄະນະກຳມະການ, ກົນໄກ ແລະ ຂັ້ນຕອນໃນການຄັດເລືອກ ຫຼື ກຳນົດຄ່າຕອບແທນຂອງສະພາບໍລິຫານ, ສະມາຊິກສະພາບໍລິຫານ, ຄະນະກຳມະການຕ່າງໆຂອງສະພາບໍລິຫານ ແລະ ຄະນະອຳນວຍການ ຕະຫຼອດຮອດວິທີການເຮັດວຽກ ແລະ

ນະໂຍບາຍກຳນົດຄ່າຕອບແທນຕ່າງໆ ຂອງຄະນະກຳມະການ ແລະ ອື່ນໆ ພ້ອມທັງສະເໜີໃຫ້ສະພາບໍລິຫານຂອງ ບໍລິສັດ ພິຈາລະນາ ແລະ ຮັບຮອງເອົາ;

- ສະພາບໍລິຫານຄວນສ້າງ ແລະ ຮັບຮອງນະໂຍບາຍ ຫຼື ກົນໄກ ເພື່ອປົກປ້ອງພະນັກງານ ຫຼື ຜູ້ມີສ່ວນຮ່ວມໃນ ຕະຫຼາດຂອງຕົນ ທີ່ສະໜອງຂໍ້ມູນ, ຄຳເຫັນ ຫຼື ຄຳຮ້ອງຮຽນ ກ່ຽວກັບພຶດຕິກຳທີ່ບໍ່ສອດຄ່ອງກັບຫຼັກຈັນຍາບັນ ຂອງບໍລິສັດ;
- ຄະນະກຳມະການຄຸ້ມຄອງຄວາມສ່ຽງຄວນສ້າງ ແລະ ຄຸ້ມຄອງຂັ້ນຕອນ ແລະ ນະໂຍບາຍໃນການກຳນົດ ແລະ ບໍລິຫານຄວາມສ່ຽງ.

### 4.2. ສິ່ງທີ່ຄວນນຳໄປເປີດເຜີຍຂໍ້ມູນ ແລະ ຈັດຕັ້ງປະຕິບັດ

ເພື່ອປັບປຸງວຽກງານການຄຸ້ມຄອງບໍລິຫານໃຫ້ດີຂຶ້ນ, ປທລ ຄວນເພີ່ມຄວາມເອົາໃຈໃສ່ບັນຫາ ດັ່ງນີ້:

- ຄວນເປີດເຜີຍນະໂຍບາຍກ່ຽວກັບລາຍການທີ່ກ່ຽວພັນ ເປັນຕົ້ນ ຂັ້ນຕອນການພິຈາລະນາ ແລະ ການອະນຸມັດ ລາຍການທີ່ກ່ຽວພັນ (RPTs), ນະໂຍບາຍເງິນປັນຜົນ ແລະ ວິທີການຈ່າຍເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນ, ກຸ່ມ ບໍລິສັດ ຫຼື ບໍລິສັດໃນກຸ່ມ ຂອງຕົນ (ຖ້າມີ ຫຼື ບໍ່ມີກໍ່ຕາມ), ຈຳນວນຄັ້ງໃນການຈັດກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມຄະນະກຳມະການຂອງສະພາບໍລິຫານ, ເຫດການສຳຄັນພາຍໃນປີ, ນະໂຍບາຍການກຳນົດຄ່າ ຕອບແທນ ແລະ ມູນຄ່າລວມຂອງສະມາຊິກສະພາບໍລິຫານ, ຄະນະອຳນວຍການ ແຕ່ລະທ່ານ ໃນບົດລາຍງານ ການເຄື່ອນໄຫວທຸລະກິດປະຈຳປີ;
- ຄວນເປີດເຜີຍຂໍ້ມູນກ່ຽວກັບ ລາຍຊື່ຜູ້ຖືຮຸ້ນ ທາງກົງ ແລະ ທາງອ້ອມ ທີ່ຖືຮຸ້ນແຕ່ 5% ຂຶ້ນໄປ;
- ຄວນເປີດເຜີຍຂໍ້ມູນກ່ຽວກັບການຖືຮຸ້ນ ທາງກົງ ແລະ ທາງອ້ອມຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳ ນວຍການ;
- ຄວນເປີດເຜີຍຂໍ້ມູນກ່ຽວກັບເອກະສານລາຍງານການເງິນປະຈຳໄຕມາດ/ປະຈຳປີ, ບົດລາຍງານການເຄື່ອນໄຫວ ທຸລະກິດປະຈຳ 6 ເດືອນຕົ້ນປີ/ປະຈຳປີ, ມະຕິກອງປະຊຸມຜູ້ຖືຮຸ້ນ ແລະ ບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ໃນເວັບ ໄຊ້ຂອງບໍລິສັດ ຢ່າງປົກກະຕິ;
- ສະພາບໍລິຫານຄວນສ້າງ ແລະ ເປີດເຜີຍມາດຖານທີ່ນຳໃຊ້ໃນການຄັດເລືອກ, ຂັ້ນຕອນ, ເງື່ອນໄຂ ແລະ ການ ແຕ່ງຕັ້ງສະພາບໍລິຫານ ແລະ ຄະນະອຳນວຍການຊຸດໃໝ່;
- ຄວນລາຍງານ ຫຼື ເປີດເຜີຍຂໍ້ມູນການຊື້ ຂາຍຮຸ້ນບໍລິສັດ ຂອງສະມາຊິກສະພາບໍລິຫານ ຫຼື ຄະນະອຳນວຍການ, ຫົວໜ້າກວດກາພາຍໃນ, ຫົວໜ້າບັນຊີ ແລະ ຫົວໜ້າການເງິນ ພາຍໃນ 72 ຊົ່ວໂມງ;
- ຄວນເປີດເຜີຍຄ່າບໍລິການຂອງບໍລິສັດກວດສອບທີ່ໄດ້ຮັບຈາກການກວດສອບເອກະສານລາຍງານການເງິນ ແລະ ຄ່າບໍລິການອື່ນທີ່ບໍ່ກ່ຽວຂ້ອງກັບການກວດເອກະສານລາຍງານການເງິນ (ຖ້າມີ ຫຼື ບໍ່ມີກໍ່ຕາມ);
- ຄວນມີການສັບປ່ຽນບໍລິສັດກວດສອບພາຍນອກ ທຸກໆ 5 ປີ;
- ສະພາບໍລິຫານຄວນແຕ່ງຕັ້ງ ຫຼື ສະໜອງເອກະສານກ່ຽວກັບການແຕ່ງຕັ້ງຄະນະກຳມະການຕ່າງໆ ຂອງສະພາ ບໍລິຫານ ພ້ອມທັງເປີດເຜີຍຂໍ້ ມູນຂອງຄະນະກຳມະການດັ່ງກ່າວ ຢ່າງລະອຽດ ໃນບົດບົດລາຍງານ ການເຄື່ອນໄຫວທຸລະກິດປະຈຳປີ;
- ປະທານຂອງຄະນະກຳມະການຕ່າງໆ ຂອງສະພາບໍລິຫານ ຄວນແມ່ນສະມາຊິກອິດສະຫຼະ;

- ສະພາບໍລິຫານ ຄວນຮັບຮອງ ແລະ ເປີດເຜີຍລະບຽບພາຍໃນຂອງຄະນະກຳມະການຕ່າງໆ ຂອງສະພາບໍລິຫານໃຫ້ມວນຊົນຮັບຊາບຜ່ານເວັບໄຊຂອງບໍລິສັດ;
- ສະພາບໍລິຫານຄວນຮັບຮອງເອົາແຜນຈັດກອງປະຊຸມຂອງສະພາບໍລິຫານ ແລະ ຄະນະກຳມະການຕ່າງໆ ກວມເອົາວັນຈັດກອງປະຊຸມ ແລະ ວາລະທີ່ຈະນຳມາປຶກສາຫາຫາລື;
- ສະມາຊິກສະພາບໍລິຫານແຕ່ລະຄົນ ຄວນໄດ້ຮັບເອກະສານທີ່ຕິດພັນກັບກອງປະຊຸມສະພາບໍລິຫານ ຫຼື ຄະນະກຳມະການຂອງສະພາບໍລິຫານ ຢ່າງໜ້ອຍ 7 ວັນລັດຖະການ ກ່ອນການປະຊຸມ;
- ຄວນເຜີຍແຜ່ກົດລະບຽບຂອງສະພາບໍລິຫານໃນເວັບໄຊຂອງບໍລິສັດ;
- ສະພາບໍລິຫານຄວນສ້າງ ແລະ ເປີດເຜີຍແຜນສືບທອດພະນັກງານ ສຳລັບຕຳແໜ່ງສະມາຊິກສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານທີ່ສຳຄັນຂອງບໍລິສັດ;
- ຄະນະກຳມະການສະພາບໍລິຫານ ຄວນຈັດກອງປະຊຸມສອດຄ່ອງຕາມລະບຽບການທີ່ກ່ຽວຂ້ອງ ພ້ອມນັ້ນ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການ ຄວນເຂົ້າຮ່ວມກອງປະຊຸມດັ່ງກ່າວ ເປັນປົກກະຕິ;
- ສະພາບໍລິຫານຄວນປະເມີນຜົນການເຄື່ອນໄຫວວຽກງານຂອງສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານປະຈຳປີ;
- ສະພາບໍລິຫານຄວນເຜີຍແຜ່ມາດຖານ, ເງື່ອນໄຂ ແລະ ຂັ້ນຕອນກ່ຽວກັບການປະເມີນຜົນການເຄື່ອນໄຫວວຽກງານຂອງປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ.

ຜູ້ອຳນວຍການໃຫຍ່ ຕລຊລ

ສຸພັກ ຖິ່ນໄຊພອນ